ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ ເລກທີ: 270 /ນຍ.

ນະຄອນຫລວງວຽງຈັນ, ວັນທີ: 30.12.2008

# ດຳລັດ

## ວ່າດ້ວຍ ການກຳນົດເຂດປ່າຜະລິດ

## ຈຳນວນ 14 ເຂດ ໃນ 5 ແຂວງ

----------------------------

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບ ເລກທີ 02/03/ສພຊ, ລົງວັນທີ 06/05/ 2003.
- ອີງຕາມ ກົດໝາຍປ່າໄມ້ ສະບັບ ເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມເອກະສານສະເໜີຂອງທ່ານລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 1532/ກປ.08 ລົງວັນທີ 29/12/2008.

## ນາຍົກລັດຖະມົນຕີ ອອກດຳລັດ:

ມາດຕາ 1: ຮັບຮອງເອົາເຂດປ່າຜະລິດຈຳນວນ 14 ເຂດໃນ 5 ແຂວງ ຄື: ແຂວງ ຜົ້ງສາລີ, ຫຼວງນ້ຳທາ, ຫຼວງພະບາງ, ຈຳປາສັກ, ແລະ ແຂວງເຊກອງ ກຳນົດເປັນເຂດ ປ່າຜະລິດແຫ່ງຊາດ ລະອຽດມີດັ່ງນີ້:

| ລ/ດ | ຊື່ປ່າຜະລິດ | ເນື້ອທີ່ (ຮຕ) | ທີ່ຕັ້ງ (ແຂວງ) | ຂອບເຂດທີ່ຕັ້ງ | |
|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ |
| 01. | ນ້ຳບູນ | 49.234 | ຜົ້ງສາລີ | 101° 46' 40'' - 102° 02' 40'' | 21° 19' 10'' - 21° 37' 40'' |
| 02. | ນ້ຳບານ-ປ່າລານ | 109.339 | ຜົ້ງສາລີ | 102° 27' 40'' - 102° 50' 05'' | 21° 14' 00'' - 21° 38' 00'' |
| 03. | ພູແລັດ-ລ້ອງມູນ | 20.150 | ຫຼວງນ້ຳທາ | 101° 08' 40'' - 101° 22' 40'' | 20° 27' 45'' - 20° 38' 00'' |
| 04. | ນ້ຳຟ້າ | 24.649 | ຫຼວງນ້ຳທາ | 100° 41' 10'' - 100° 54' 00'' | 20° 45' 50'' - 20° 55' 55'' |

| | | | | | |
|---|---|---|---|---|---|
| **05.** | ສາຍນ້ຳຄານ | 64.043 | ຫຼວງພະບາງ | 102°30'20"-103°00'30" | 19°45'30"- 19°57'00" |
| **06.** | ພູຫຼວງໃຕ້ | 83.017 | ຫຼວງພະບາງ | 103°21'00"-103°37'20" | 19°59'00"- 20°10'40" |
| **07.** | ໜອງຕະໂງກ | 58.000 | ຈຳປາສັກ | 105°29'50"-105°41'10" | 14°13'30"- 14°45'40" |
| **08.** | ຫ້ວຍເປັນ | 89.532 | ເຊກອງ | 106°36'30"-106°59'00" | 15°15'00"- 15°45'30" |
| **09.** | ປຊູງ | 16.990 | ເຊກອງ | 105°25'00"-107°37'00" | 15°12'00"- 15°24'00" |
| **10.** | ດາກຈາງ | 38.461 | ເຊກອງ | 106°56'00"-107°13'00" | 15°33'00"- 15°49'00" |
| **11.** | ພູກະເຕີນ | 21.338 | ເຊກອງ | 106°44'00"-106°56'00" | 15°47'00"- 15°58'00" |
| **12.** | ຊຽງຫຼວງ | 5.396 | ເຊກອງ | 107°03'10"-107°09'20" | 15°16'10"- 15°21'10" |
| **13.** | ນ້ຳແດ | 11.760 | ເຊກອງ | 107°00'00"-107°08'10" | 15°26'10"- 15°33'30" |
| **14.** | ດາກມອງ | 5.028 | ເຊກອງ | 107°16'10"-107°22'40" | 15°15'10"- 15°19'30" |
| | **ເນື້ອທີ່ລວມ:** | **596.937** | | | |

ມາດຕາ 2: ມອບໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ປະສານສົມທົບກັບອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງດຳເນີນການສຳຫລວດ, ວາງແຜນຈັດສັນ ແລະ ຄຸ້ມຄອງ ແບບຍືນນານໃຫ້ໄດ້ຮັບຜົນດີ.

ມາດຕາ 3: ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫລວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງ ອື່ນໆຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 4: ດຳລັດສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສ ປ ປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ★ ນາຍົກລັດຖະມົນຕີ

**ບົວສອນ ບຸບຜາວັນ**